# ສປປ ລາວ ເລັ່ງສ້າງນັກວິເຄາະຫຼັກຊັບມືອາຊີບ



**ຂ່າວ - ພາບ : ຣັດສະໝີ ດວງສັດຈະ**

ທ້າຍປີນີ້ ສປປລາວ ກໍ່ຈະມີຕະຫຼາດທຶນເປັນຄັ້ງປະຫວັດສາດ ເຊື່ອແນ່ວ່າ : ມັນຈະດູດເມັດເງິນມະຫາສານເຂົ້າສູ່ປະເທດຊາດ,ສະນັ້ນເພື່ອເປັນການຮອງຮັບການເກີດຂຶ້ນຂອງຕະຫຼາດຫຼັກຊັບທະນາຄານແຫ່ງ ສປປລາວ ຈຶ່ງໄດ້ເລັ່ງໃສ່ດຳເນີນການສ້າງນັກວິເຄາະມືອາຊີບເປັນການໃຫຍ່ ເພາະພວກຄົນດັ່ງກ່າວຈະກາຍເປັນຫົວຈັກອັນສຳຄັນໃນວຽກງານຫຼັກຊັບເຊິ່ງນັກເຝິກອົບຮົມໃນຄັ້ງນີ້ສ່ວນໃຫຍ່ກໍ່ເຝິກຫຼັກສູດນັກການຕະຫຼາດສຳລັບທຸລະກິດຫຼັກຊັບມາແລ້ວ,ການເຝິກອົບຮົມຈະດຳເນີນໄປເປັນເວລາ 9 ມື້ໂດຍເລີ່ມຕົ້ນແຕ່ວັນທີ 2 ກໍລະກົດທີ່ອາຄານຊົ່ວຄາວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ( ສຄຕລ ) ໂດຍມີນັກວິທະຍາກອນທີ່ເປັນຜູ້ອຳນວຍການອາວຸໂສ ແລະ ເປັນຫົວໜ້າວິໄຈການລົງທຶນບໍລິສັດຫຼັກຊັບ semico ຈຳກັດ ( ປະເທດໄທ )

ທ່ານ ນາງ ວັດທະນາ ດາລາລອຍ ຮັກສາການຫົວໜ້າ ສຄຕລ ໄດ້ ຢືນຢັນວ່າ : ຕະຫຼາດຫຼັກຊັບມີບົດບາດສຳຄັນໃນການຈັດຫາເງິນທຶນໄລຍະຍາວ ເພື່ອມາສ້າງສາພັດທະນາປະເທດຊາດ,ເມື່ອເປັນເຊັ່ນນັ້ນເພື່ອຮັບປະກັນໃຫ້ລະບົບຕະຫຼາດທຶນເດີນເຂົ້າສູ່ຜົນສຳເລັດໃນຂ້າງໜ້າມັນຈຶ່ງຈຳເປັນຕ້ອງສ້າງບຸກຄະລາກອນທາງດ້ານທຸລະກິດຫຼັກຊັບທີ່ພຽບພ້ອມໄປດ້ວຍຄວາມຊຳນິຊຳນານ ແລະ ໄດ້ຜ່ານບັ້ນຝຶກອົບຮົມທາງດ້ານວິຊາຊີບທຸລະກິດຫຼັກຊັບ.

ທ່ານ ນາງ ວັດທະນາ ດາລາລອຍ ໄດ້ເນັ້ນຕື່ມວ່າ : ໃນການເຝິກອົບຮົມຄັ້ງນີ້ຈະເຮັດໃຫ້ນັກສຳມະນາກອນໄດ້ກຳແໜ້ນຄວາມຮູ້ ແລະ ປະສົບການໃນການວິເຄາະຫຼັກຊັບ,ພ້ອມນັ້ນກໍຍັງຈະມີການແລກປ່ຽນຄຳຄິດເຫັນກັບນັກເຝິກອົບຮົມດ້ວຍກັນກໍຄືນັກວິທະຍາກອນທີ່ມີຄວາມຊ່ຽວຊານດ້ານການວິເຄາະເລື່ອງຫຼັກຊັບເພື່ອຊ່ວຍໃຫ້ຄຳແນະນຳແກ່ຜູ້ປະກອບການ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຫຼັກຊັບໃນອະນາຄົດເຊິ່ງມີບໍລິສັດທີ່ກະກຽມຈົດທະບຽນ ແລະ ນັກລົງທຶນ.

ທ່ານ ດຣ ອາຄົມປູະເສີດ ຮອງຫົວໜ້າຮັກສາການ ສຄຕລ ໄດ້ບອກຕື່ມວ່າ : ການເຝິກອົບຮົມໂຄງການຫຼັກສູດນັກວິເຄາະຫຼັກຊັບເປັນຄັ້ງທີ I ແລະ ກໍຈະດຳເນີນການເຝິກອົບຮົມອີກເປັນຄັ້ງຕໍ່ໄປ ແລະ ກ່ອນໜ້ານີ້ ສຄຕລ ກໍໄດ້ມີການເປີດເຝິກອົບຮົມຫຼັກສູດນັກການຕະຫຼາດສຳລັບທຸລະກິດຫຼັກຊັບມາແລ້ວສອງຄັ້ງ ເຊິ່ງໄດ້ເປັນການປະກອບສ່ວນອັນສຳຄັນໃນການສ້າງບຸກຄາລະກອນເພື່ອຮັບຮອງໃຫ້ແກ່ຕະຫຼາດຫຼັກຊັບທີ່ຈະເປີດຂຶ້ນ.